**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ.

ແຂວງຊຽງຂວາງ
ທີ່ວ່າການປົກຄອງແຂວງ

ເລກທີ..10../ຈຂ.ຊຂ.
ລົງວັນທີ.21/06/2016

ຄຳສັ່ງແນະນຳ
ຂອງ ເຈົ້າແຂວງ,ແຂວງຊຽງຂວາງ
ວ່າດ້ວຍການ ເພີ່ມທະວີ ຄວາມເຂັ້ມງວດ ໃນການຄຸ້ມຄອງ ແລະ ກວດກາການຂຸດຄົ້ນໄມ້,ການເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້ແຂວງຊຽງຂວາງ.

ເຖິງ: ບັນດາ ຫົວໜ້າພະແນກການ ອ້ອມຂ້າງແຂວງ, ຫົວໜ້າກອງບັນຊາການປ້ອງກັນຊາດ,ປ້ອງກັນຄວາມສະຫງົບ, ບັນດາ ອົງການຈັດຕັ້ງມະຫາຊົນ, ເຈົ້າເມືອງ 7 ເມືອງ ທົ່ວແຂວງ, ຫົວໜ່ວຍທຸລະກິດໄມ້ ແລະ ໂຮງງານປຸງແຕ່ງໄມ້.

- ອີງຕາມ,ສິດແລະໜ້າທີ່ຂອງເຈົ້າແຂວງ,ເຈົ້າຄອງນະຄອນຫຼວງ ທີ່ລະບຸໃນ ໝວດທີ III, ມາດຕາ 14 ຂອງ ກົດໝາຍ ການປົກຄອງ ທ້ອງຖິ່ນ ແຫ່ງ ສປປ ລາວ
- ອີງຕາມ, ຄຳສັ່ງຂອງນາຍົກລັດຖະມົນຕີ ເລກທີ 15/ນຍ,ລົງວັນທີ 13 ພຶດສະພາ 2016 ວ່າດ້ວຍການ ເພີ່ມທະວີ ຄວາມເຂັ້ມງວດ ໃນການຄຸ້ມຄອງ ແລະ ກວດກາການຂຸດຄົ້ນໄມ້,ການເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້ ໃນຂອບເຂດທົ່ວປະເທດ.

ເພື່ອຮັບປະກັນ ຄວາມເປັນເອກະພາບ ໃນການຈັດຕັ້ງຜັນຂະຫຍາຍ ຄຳສັ່ງຂອງ ນາຍົກລັດຖະ ມົນຕີ ສະບັບເລກທີ15/ນຍ, ລົງວັນທີ 13 ພຶດສະພາ 2016 ໃຫ້ປະກົດຜົນເປັນຈິງ,ເຮັດໃຫ້ການຈັດຕັ້ງປະຕິບັດ ວຽກງານຄຸ້ມຄອງປ່າໄມ້,ການຂຸດຄົ້ນໄມ້,ເຄື່ອນຍ້າຍໄມ້, ທຸລະກິດໄມ້, ໂຮງງານປຸງແຕ່ງໄມ້ ແລະ ການສົ່ງອອກໄມ້ ໃຫ້ມີຄວາມເຂັ້ມງວດ ຕາມກົດໝາຍ ແລະ ນິຕິກຳອື່ນໆ ທີ່ລັດຖະບານວາງອອກ

## ເຈົ້າແຂວງ,ແຂວງຊຽງຂວາງ ອອກຄຳສັ່ງແນະນຳດັ່ງນີ້:

1. ໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງ ເພີ່ມທະວີຄວາມເອົາໃຈໃສ່ ແລະ ຄວາມຮັບຜິດຊອບ ຊີ້ນຳ,ນຳພາ ບັນດາຂະແໜງການ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນເອງ ເພື່ອຍົກສູງຄວາມເປັນເຈົ້າການ ໃນການຄຸ້ມຄອງ ແລະ ກວດກາ ການຂຸດຄົ້ນໄມ້,ການເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້ ໃຫ້ມີປະສິດທິຜົນ ໂດຍການຫັນເອົາ ການຄຸ້ມຄອງປ່າໄມ້ ແລະ ທຸລະກິດໄມ້ ເຂົ້າສູ່ລະບຽບກົດໝາຍ ຢ່າງເຂັ້ມງວດ. ໂດຍໃຫ້ຖື ສຳຄັນວຽກງານໂຄສະນາ,ສຶກສາອົບຮົມ,ເຜີຍແຜ່ເຊື່ອມຊຶມ ແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ ກ່ຽວກັບການຄຸ້ມຄອງປ່າໄມ້ ໃຫ້ແກ່ພະນັກງານ,ທະຫານ,ຕຳຫຼວດ,ຜູ້ປະກອບການ ແລະ ທົ່ວປວງຊົນ ຮັບຮູ້, ເຂົ້າໃຈ ແລະ ເປັນເອກະພາບ ໃນການຈັດຕັ້ງປະຕິບັດ ໃນຂອບເຂດ ທົ່ວແຂວງ.
2. ມອບໃຫ້ພະແນກກະສິກຳແລະປ່າໄມ້ແຂວງ ເປັນເຈົ້າການ ເຂັ້ມງວດ ໃນການຄຸ້ມຄອງ ແລະ ກວດກາ ການເຄື່ອນຍ້າຍໄມ້ ແລະເຄື່ອງປ່າຂອງດົງ ຕາມພາລະບົດບາດຂອງຕົນ. ບໍ່ໃຫ້ເອື້ອອຳນວຍ ຄວາມສະດວກ

ແລະ ບໍ່ໃຫ້ອອກໃບອະນຸຍາດ ເຄື່ອນຍ້າຍໄມ້ທ່ອນ,ໄມ້ຕີຕັບ,ໄມ້ເລື່ອຍແປຮູບ,ຮາກໄມ້ ຫຼື ເຫງົ້າໄມ້,ຕໍໄມ້,ປຸດໄມ້,ງ່າໄມ້ ທີ່ຍັງບໍ່ທັນຜ່ານການປຸງແຕ່ງ ເປັນຜະລິດຕະພັນໄມ້ສຳເລັດຮູບ ລວມທັງໄມ້ຢືນຕົ້ນ,ໄມ້ປະດັບ ທີ່ຂຸດຄົ້ນອອກຈາກປ່າທຳມະຊາດ ໄປຕ່າງປະເທດ ໃນທຸກກໍລະນີ ໂດຍບໍ່ໄດ້ຮັບ ອະນຸຍາດຈາກລັດຖະບານ ຢ່າງເດັດຂາດ.

3. ໃຫ້ພະແນກກະສິກຳ ແລະ ປ່າໄມ້ ແຂວງ ສົມທົບກັບ ອຳນາດການປົກຄອງ ຂັ້ນເມືອງ ກວດກາຫຼັງ ການຂຸດຄົ້ນໄມ້ ແລະ ເຮັດບົດບັນທຶກປິດປ່າ ຢ່າງຂາດຕົວ ກັບບັນດາຫົວໜ່ວຍທຸລະກິດ. ເປັນໃຈກາງປະສານສົມທົບກັບ ກອງບັນຊາການທະຫານ ແຂວງ ແລະ ຂະແໜງການອື່ນໆ ກວດກາລາດຕະເວນ ຕາມເຂດຊາຍແດນ ທີ່ຫຼໍ່ແຫຼມ ຕໍ່ການລັກລອບຂຸດຄົ້ນໄມ້,ເຄື່ອນຍ້າຍໄມ້, ສະຖານທີ່ຂຸດຄົ້ນໄມ້,ຕາມເສັ້ນທາງຕ່າງໆ, ສະຖານທີ່ທ້ອນໂຮມໄມ້,ໂຮງເລື່ອຍໄມ້,ໂຮງງານປຸງແຕ່ງໄມ້,ໂຮງງານເຟີນີເຈີ,ສາງເກັບມ້ຽນໄມ້,ເຕົາອົບເຄື່ອງປ່າຂອງດົງ,ເຕົາເຜົາຖ່ານ,ເຕົາເຜົາດິນຈີ່, ໂຮງງານອື່ນໆທີ່ໃຊ້ໄມ້ເປັນພະລັງງານ ແລະ ສະຖານທີ່ ອື່ນໆຕາມການລາຍງານມາແລ້ວ. ຖ້າມີການລະເມີດ ຫຼື ກະທຳຜິດ ແມ່ນໃຫ້ດຳເນີນການສືບສວນ-ສອບສວນ ເພື່ອມີມາດຕະການທາງແພ່ງແລະອາຍາ; ໃນກໍລະນີຮ້າຍແຮງແມ່ນໃຫ້ປະກອບສຳນວນຄະດີ ສົ່ງໃຫ້ໄອຍະການ ສັ່ງຟ້ອງຂຶ້ນສານຕາມຂະບວນການກົດໝາຍ.

4. ໃຫ້ ພະແນກພະແນກກະສິກຳ ແລະ ປ່າໄມ້ ເປັນໃຈກາງປະສານສົມທົບກັບ ພະແນກອຸດສາຫະກຳ-ການຄ້າ ແຂວງ,ກອງບັນຊາການປ້ອງກັນຄວາມສະຫງົບ ແລະ ຂະແໜງການອື່ນໆທີ່ກ່ຽວຂ້ອງ ດຳເນີນການກວດກາການນຳເຂົ້າ,ການຊື້-ຂາຍ,ການມີໄວ້ໃນຄອບຄອງ ແລະ ການນຳໃຊ້ ເຄື່ອງມື ອຸປະກອນ,ເຄື່ອງຈັກ ແລະ ພາຫະນະຂຸດຄົ້ນໄມ້ທີ່ບໍ່ໄດ້ຮັບອະນຸຍາດຈາກຂະແໜງການກ່ຽວຂ້ອງ, ຖ້າມີການຊຸກເຊື່ອງ ເພື່ອລັກລອບ ນຳໃຊ້ແມ່ນໃຫ້ຍຶດ ແລ້ວ ດຳເນີນຄະດີ ຕໍ່ຜູ້ກະທຳຜິດ ຕາມລະບຽບກົດໝາຍຢ່າງເຂັ້ມງວດ.

5. ຢຸດຕິຢ່າງຂາດໂຕ ກ່ຽວກັບການສ້າງແຜນສະເໜີ ຂໍອະນຸຍາດດຳເນີນການສຳຫຼວດໄມ້ຕາມໂຄງການ ພື້ນຖານໂຄງລ່າງຕ່າງໆ,ການສະເໜີຂໍອະນຸຍາດ ຂຸດຄົ້ນ,ເກັບກູ້,ທ້ອນໂຮມໄມ້ປະເພດຕ່າງໆໃນທຸກກໍລະນີ ທັງແຂວງ ແລະ ເມືອງ ໃນທົ່ວແຂວງ.

6. ຖ້າມີການອະນຸຍາດ ຂຸດຄົ້ນໄມ້ ຢູ່ຂອບເຂດປ່າຜະລິດ ແລະ ເຂດພັດທະນາກໍ່ສ້າງພື້ນຖານໂຄງລ່າງໃນຂອບເຂດແຂວງຊຽງຂວາງ ເຊັ່ນ: ແລວບຸກເບີກກໍ່ສ້າງເສັ້ນທາງໃໝ່,ເຂດກໍ່ສ້າງເຂື່ອນໄຟຟ້າແລວສາຍໄຟຟ້າ,ເຂດຂຸດຄົ້ນແຮ່ທາດ,ເຂດກໍ່ສ້າງຊົນລະປະທານ ເນື້ອທີ່ທຳການຜະລິດແລະອື່ນໆແມ່ນໃຫ້ປະຕິບັດຕາມການອະນຸຍາດຂອງລັດຖະບານເທົ່ານັ້ນ ແລະ ຕ້ອງຈັດຕັ້ງປະຕິບັດໃຫ້ຖືກຕ້ອງສອດຄ່ອງກັບ ຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 31/ນຍ,ລົງວັນທີ 5ພະຈິກ 2013 ຢ່າງເຂັ້ມງວດ.

7. ໃຫ້ພະແນກກະສິກຳ ແລະ ປ່າໄມ້ ແຂວງເປັນໃຈກາງ ປະສານສົມທົບກັບ ພາກສ່ວນກ່ຽວຂ້ອງຂອງແຂວງ, ອຳນາດການປົກຄອງຂັ້ນເມືອງ ຄົ້ນຄວ້າ ແລະ ສົ່ງເສີມການ ລົງທຶນປູກໄມ້ ໂດຍສະເພາະແມ່ນການລົງທຶນປູກໄມ້ແປກ ເພື່ອ ພັດທະນາຜະລິດຕະພັນຢາງແປກ ສົ່ງເສີມການສ້າງລາຍຮັບ ອັນໝັ້ນຄົງຂອງປະຊາຊົນ.

8. ໃຫ້ພະແນກກະສິກຳ ແລະ ປ່າໄມ້,ພະແນກຊັບພະຍາກອນ ທຳມະຊາດ ແລະສິ່ງແວດລ້ອມ,ພະແນກອຸດສາຫະກຳ-ການຄ້າ ແລະ ພະແນກການເງິນ ເອົາໃຈໃສ່ ປັບປຸງໜ່ວຍງານ ແລະ ບຸກຄະລະກອນ ຂອງຕົນ ທີ່ຮັບຜິດຊອບວຽກງານການຄຸ້ມຄອງປ່າໄມ້,ທຸລະກິດໄມ້ ແຕ່ ຂັ້ນແຂວງ ລົງຮອດຂັ້ນເມືອງໃຫ້ແທດເໝາະກັບສະພາບຄວາມເປັນຈິງ ແລະ ຮັບປະກັນ ການຄວາມເຂັ້ມງວດ ແລະໂປ່ງໃສ.

9. ໃຫ້ພະແນກອຸດສາຫະກຳ-ການຄ້າ ແຂວງ ເປັນເຈົ້າການປະສານສົມທົບກັບພາກສ່ວນກ່ຽວຂ້ອງຂອງແຂວງ ແລະ ອຳນາດການປົກຄອງຂັ້ນເມືອງ ຮີບຮ້ອນ ການດັດສົມໂຮງງານປຸງແຕ່ງໄມ້ປຸງແຕ່ງໄມ້ ແລະ ໂຮງງານເຟີນີ